Washington
Apple Health

# ຂ່າວສານສຳຄັນຈາກ **Health Care Authority**

ໃບຟອມ IRS Form 1095-B ທີ່ຖືກຄັດມານຳແມ່ນ ສຳລັບທຸກໆຄົນຜູ້ທີ່ໄດ້ຮັບການຄຸ້ມກັນຈຳເປັນຕ່ຳສຸດໂດຍຜ່ານໂຄງການ Washington Apple Health (Medicaid) ສຳລັບເວລານຶ່ງເດືອນ ຫລື ຫລາຍເດືອນຂອງປີຈ່າຍຄ່າພາສີ.

## ເປັນຫຍັງຂ້ອຍຈຶ່ງໄດ້ຮັບໃບຟອມໃບນີ້ ແລະ ຂ້ອຍຈະເຮັດຫຍັງ ນຳໃບຟອມ?

ໃບຟອມພາສີໃບນີ້ໃຫ້ຣາຍຣະອຽດທີ່ພວກເຮົາຈະສົ່ງໄປຫາພະແນກງົບປະມານພາຍໃນ Internal Revenue Service (IRS) ກ່ຽວກັບການຄຸ້ມກັນສຸຂະພາບຂອງທ່ານສຳລັບປີຈ່າຍຄ່າພາສີ. ບໍ່ກ່ຽວວ່າທ່ານຈະຍື່ນປະກອບໃບພາສີຣາຍໄດ້ ຫລື ບໍ່, ຈົ່ງເກັບຮັກສາໃບຟອມໃບນີ້ໄວ້ໃຫ້ເປັນບັນທຶກຂອງທ່ານ.

ເພື່ອຈະຮູ້ຈັກວ່າທ່ານຈະຕ້ອງໄດ້ຍື່ນໃບພາສີຣາຍໄດ້ ຫລື ບ ຫລື ວ່າຄວນຈະຍື່ນເຖິງແມ່ນວ່າມັນຈະ ບໍ່ຈ ຳ ເປັນຕ້ອງໄດ້ ເຮັດ, ແວ່ຢ້ຽມ www.irs.gov ຫລື ປຶກສານຳ ຜູ້ຊ່ຽວຊານເຣື່ອງພາສີ.

## ການຄຸ້ມກັນ **Apple Health** ທຸກໆຢ່າງແມ່ນການຄຸ້ມກັນຈຳເປັນຕ່ຳສຸດບໍ່ ?

ບໍ່ແມ່ນວ່າການຄຸ້ມກັນຂອງ Apple Health ທຸກໆຢ່າງ ຈະແມ່ນການຄຸ້ມກັນຈຳເປັນຕ່ຳສຸດ. ມີແຕ່ບຸກຄົນຜູ້ທີ່ມີການຄຸ້ມກັນຈຳເປັນຕ່ຳສຸດເທົ່ານັ້ນສຳລັບປີຈ່າຍຄ່າພາສີຈະຖືກບົ່ງຊີ້ຢູ່ໃນ ໃບຟອມ 1095-B.

## ຖ້າຫາກວ່າຣາຍຣະອຽດບໍ່ຖືກຕ້ອງ ຫລື ຂາດບໍ່ພໍຈາກ ໃບຟອມ **1095-B** ຂອງຂ້ອຍ?

ຈົ່ງຕິດຕໍ່ຫາ Health Care Authority ສູນກາງ ບໍຣິການປະ ຊາ ສັມພັນການຊ່ວຍ ເຫລືອ ພະຍາບານ ເພື່ອຈະເວົ້າລົມນຳຜູ້ ຕາງຫນ້າປະຊາສັມພັນໂດຍກົງໂລດໄດ້ທີ່ເລກ: **1-800-562-3022.**

### ຄຳຖາມ & ແຫລ່ງຊ່ວຍເຫລືອກ່ຽວກັບພາສີ

ໄປທີ່: **www.irs.gov**

ໂທຫາ 2-1-1

ຫລື ສາຍຣາຍຣະອຽດດ່ວນຂອງ Clear 1-888-201-1014

## ຖ້າຫາກວ່າຂ້ອຍຕ້ອງໃບໃຫມ່ແທນເດ?

ເລືອກເອົາທາງເລືອກຕໍ່ລົງໄປນີ້ທາງນຶ່ງເພື່ອຈະສົ່ງເອົາໃບໃຫມ່ແທນ:

- ອອນລາຍນ໌ https://fortress.wa.gov/hca/p1contactus/ : (ເລືອກເອົາ "1095-B" ຈາກລາຍການຢ່ອນລົງ)
- ໂທຣະສັບ: **1-800-562-3022**

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບການຄຸ້ມກັນ Apple Health ແລະ ໃບຟອມ 1095-B, ຈົ່ງໄປທີ່:
**www.hca.wa.gov/1095-b**

**ຢ່າສູ່ສົ່ງໃບຟອມໃບນີ້ກັບຄືນໄປຫາ HCA. ຈົ່ງເກັບຮັກສາໃບຟອມ 1095-B ໄວ້ໃຫ້ເປັນບັນທຶກຂອງທ່ານ.**



Washington State
Health Care Authority